**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍ່ແກ້ວ
ເຈົ້າແຂວງ

ເລກທີ..177../ຈຂ.ບກ
ບໍ່ແກ້ວ, ວັນທີ..9..ກຸມພາ..2017.

# ຂໍ້ຕົກລົງ
# ຂອງເຈົ້າແຂວງ ບໍ່ແກ້ວ
# ວ່າດ້ວຍ ການກຳນົດຂອບເຂດເນື້ອທີ່ປ່າສະຫງວນ ຂອງແຂວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ດຳລັດວ່າດ້ວຍປ່າປ້ອງກັນ ສະບັບເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010.
- ອີງຕາມ ດຳລັດວ່າດ້ວຍປ່າສະຫງວນ ເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015.

ເພື່ອສ້າງ ເມືອງ ຫ້ວຍຊາຍ ໃຫ້ກາຍເປັນໃຈກາງການພັດທະນາທາງດ້ານເສດຖະກິດ, ວັດທະນາທຳ-ສັງຄົມ ຕາມທິດຍືນຍົງ ແລະ ເປັນສີຂຽວ, ສ້າງໃຫ້ເປັນຕົວເມືອງທ່ອງທ່ຽວທຳມະຊາດ ທີ່ຂຽວສົດງົດງາມ, ມີຄວາມອຸດົມສົມບູນທາງດ້ານຊີວະນາໆພັນ ທັງເປັນການກຳນົດຂອບເຂດອະນຸລັກ ປົກປັກຮັກສາສິ່ງແວດລ້ອມ ອ້ອມຮອບຕົວເມືອງ.

## ເຈົ້າແຂວງ ບໍ່ແກ້ວຕົກລົງ:

**ມາດຕາ 1** ກຳນົດຂອບເຂດເນື້ອທີ່ປ່າສະຫງວນຂອງແຂວງ ອ້ອມຮອບຕົວເມືອງຫ້ວຍຊາຍ ດັ່ງນີ້:

**ເຂດທີ 1 :** ປ່າສະຫງວນຫ້ວຍຕາບ-ພູຈອມແກ້ວ-ພູ 106 ມີເນື້ອທີ່ 5,686 ເຮັກຕາ.

- **ທິດເໜືອ** ຕິດກັບຂອບເຂດ ບ້ານນ້ຳແລ ແລະ ສາຍນ້ຳງາວ; ຈຸດພິກັດ N654117, E2255833;
- **ທິດໃຕ້** ຕິດກັບຂອບເຂດບ້ານໃຫຍ່ຫ້ວຍຊາຍໃຕ້, ຫ້ວຍຊາຍເໜືອ ແລະ ບ້ານສີບຸນເຮືອງ; ຈຸດພິກັດ N649095, E2242506;
- **ທິດຕາເວັນອອກ** ຕິດກັບຂອບເຂດ ບ້ານຫ້ວຍສາລາ; ຈຸດພິກັດ N655232 E2253261;
- **ທິດຕາເວັນຕົກ** ຕິດກັບຂອບເຂດ ບ້ານຫ້ວຍຕາບ ແລະ ຫ້ວຍມອນ; ຈຸດພິກັດ N646544, E2246591.

**ເຂດທີ 2 :** ປ່າສະຫງວນພູຈອມຈຸກ-ປະຕູທຳ ມີເນື້ອທີ່ 3,918 ເຮັກຕາ.

- **ທິດເໜືອ** ຕິດກັບຂອບເຂດ ບ້ານຫ້ວຍຊາຍນ້ອຍ, ບ້ານຝາຍ ແລະ ອ່າງນ້ຳຕົມ; ຈຸດພິກັດ N661345, E2241691;
- **ທິດໃຕ້** ຕິດກັບຂອບເຂດ ແມ່ນ້ຳຂອງ; ຈຸດພິກັດ N657323, E2231931;

- **ທິດຕາເວັນອອກ** ຕິດກັບຂອບເຂດ ທົ່ງພ້າວຫ້າວ ເຂດດ່ານຖິ່ນ; ຈຸດພິກັດ N661919,  E2240455;
- **ທິດຕາເວັນຕົກ** ຕິດກັບຂອບເຂດ ບ້ານດອນ, ບ້ານປາກຮາວໄຕ້ ແລະ ບ້ານຈອມຈຸກ; ຈຸດພິກັດ N653305,  E2234720.

**ມາດຕາ 2** ຂອບເຂດເນື້ອທີ່ ທີ່ໄດ້ກຳນົດດັ່ງກ່າວ ແມ່ນໃຫ້ອະນຸລັກປົກປັກຮັກສາ ແລະ ຟື້ນຟູໃຫ້ກາຍເປັນເຂດສີຂຽວ ອ້ອມຮອບຕົວເມືອງຫ້ວຍຊາຍ ແລະ ເປັນປ່າສະຫງວນຂອງແຂວງ.

- ບຸກຄົນ, ນິຕິບຸກຄົນ ທີ່ໄດ້ປູກໄມ້ອຸດສາຫະກຳ ຫຼື ໄມ້ໃຫ້ໝາກ ຢູ່ພາຍໃນຂອບເຂດເນື້ອທີ່ ທີ່ໄດ້ກຳນົດນີ້ມາກ່ອນ ແມ່ນໃຫ້ສືບຕໍ່ບົວລະບັດ, ປົກປັກຮັກສາ, ອະນຸລັກຟື້ນຟູ, ໃຫ້ເປັນປ່າສີຂຽວ ແລະ ສາມາດຊົມໃຊ້ຜົນຜະລິດໄດ້ຕາມເງື່ອນໄຂຕົວຈິງ ແຕ່ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຫ້າມຕັດຕົ້ນໄມ້, ບຸກລຸກ, ຈູດເຜົາ ທຳລາຍ ຫຼື ໂອນກຳມະສິດ (ຊື້-ຂາຍ) ຢ່າງເດັດຂາດ.

**ມາດຕາ 3** ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ເມືອງຫ້ວຍຊາຍ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າວາງແຜນ, ກຳນົດລະບຽບການຄຸ້ມຄອງ ປັກຫຼັກໝາຍເຂດແດນ, ຕິດປ້າຍ  ພ້ອມທັງໂຄສະນາ, ສຶກສາອົບຮົມ  ນຳພາແນວຄິດທົ່ວປວງຊົນ ໃຫ້ພ້ອມກັນ, ອະນຸລັກ, ຟື້ນຟູ ແລະ ປົກປັກຮັກສາປ່າສະຫງວນດັ່ງກ່າວ  ຕາມພາລະບົດບາດ,  ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 4** ຂໍ້ກຳນົດ, ບົດບັນຍັດໃດ ທີ່ກ່ຽວຂ້ອງກັບຂອບເຂດເນື້ອທີ່ປ່າສະຫງວນດັ່ງກ່າວ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດ ທາງລັດຖະການ ສິບຫ້າ ວັນ.

ເຈົ້າແຂວງ ບໍ່ແກ້ວ

ປອ ຄຳພັນ ເຜີຍຍະວົງ